# ສູນຮ່ວມມືລາວ~ຍີ່ປຸ່ນ ມ.ຊ. ປະກາດຮັບສະໝັກ
# ນັກຝຶກອົບຮົມ ຫຼັກສູດບໍລິຫານທຸລະກິດແບບຍີ່ປຸ່ນ

**ເພື່ອປະກອບສ່ວນເຂົ້າໃນການພັດທະນາທັກສະດ້ານການບໍລິຫານສຳລັບອົງກອນຕ່າງໆ ທັງພາກລັດ ແລະ ເອກະຊົນ, ໃນໄລຍະເດືອນ ກຸມພາ - ເມສາ 2010 ທີ່ຈະມາເຖິງນີ້, ສູນຮ່ວມມືລາວ-ຍີ່ປຸ່ນຈະໄດ້ຈັດຫລັກສູດຝຶກອົບຮົມ ແລະ ສຳມະນາໃນຫົວຂໍ້ຕ່າງໆ ໂດຍແມ່ນຊ່ຽວຊານສະເພາະດ້ານຈາກປະເທດຍີ່ປຸ່ນຈະມາເປັນຜູ້ສອນໂດຍກົງ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:**

## ☛ ຫຼັກສູດທີ 1: ການວາງແຜນທຸລະກິດ

| | |
|---|---|
| **ເນື້ອໃນຫຼັກສູດ** | ການເກີດຂຶ້ນຂອງຫົວໜ່ວຍທຸລະກິດໃໝ່ໆ ແມ່ນຄວາມຈຳເປັນຢ່າງຍິ່ງສຳລັບປະເທດເຮົາໃນການພັດທະນາເສດຖະກິດ. ຫຼັກສູດນີ້ໄດ້ອອກແບບມາສະເພາະເພື່ອໃຫ້ຜູ້ເຂົ້າຮ່ວມເຂົ້າໃຈເຖິງຄວາມໝາຍ ຂອງການປະກອບທຸລະກິດ, ພັດທະນາແຜນທຸລະກິດ ແລະ ທົດລອງປະຕິບັດແຜນດັ່ງກ່າວ:<br>• ອາທິດທີ1: ຮຽນສ້າງ ແລະ ປະເມີນແຜນທຸລະກິດ<br>• ອາທິດທີ2&3: ຜູ້ເຂົ້າຮ່ວມຈະໄດ້ທົດລອງສ້າງແຜນທຸລະກິດຂອງຕົນຊຶ່ງມີອາຈານເປັນຜູ້ຊ່ວຍໃຫ້ຄຳແນະນຳແຕ່ລະບຸກຄົນ |
| **ໄລຍະເວລາ** | **8 - 26 ກຸມພາ 2010 (3 ອາທິດ, 45 ຊົ່ວໂມງ); ວັນຈັນ - ສຸກ; ເວລາ 17:30 - 20:45 ໂມງ** |
| **ຄ່າຮຽນ** | 700.000 ກີບ (ລວມທັງຄ່າເອກະສານປະກອບການຮຽນ) |
| **ພາສາທີ່ໃຊ້ສອນ** | ພາສາອັງກິດ (ແປເປັນພາສາລາວ) |

## ☛ ຫຼັກສູດທີ 2: ວິທີການກວດກາການປ່ອຍເງິນກູ້ຢ່າງມີປະສິດຕິພາບ

| | |
|---|---|
| **ເນື້ອໃນຫຼັກສູດ** | ຫຼັກສູດນີ້ຈະໃຫ້ຄວາມຮູ້ທາງດ້ານທິດສະດີທີ່ສຳຄັນຕ່າງໆເຊັ່ນ: ຄວາມສຳຄັນຂອງຄົນກາງ, ຫຼັກການພື້ນຖານສຳລັບກວດສອບເງິນກູ້, ການຕິດຕາມການໃຫ້ກູ້ ແລະການຢືມ, ໂຄງສ້າງການສະໜອງທຶນຈາກພາກລັດໃຫ້ແກ່ SME, ການວິເຄາະຄວາມສ່ຽງທາງດ້ານສິນເຊື່ອ, ວິເຄາະການເງິນໃນພາກປະຕິບັດຕົວຈິງ ແລະພາກສ່ວນສຳຄັນທີ່ສຸດຂອງຫລັກສູດແມ່ນການລົງເລິກພາກປະຕິບັດຕົວຈິງກ່ຽວກັບວິທີການກວດສອບການໃບຄຳຮ້ອງເພື່ອກູ້ຢືມເງິນຂອງ SME ຊຶ່ງເປັນວິທີການພື້ນຖານສຳລັບຜູ້ເຮັດວຽກໃນຂົງເຂດສະຖາບັນການເງິນນຳໃຊ້ເປັນປະຈຳ. |
| **ໄລຍະເວລາ** | **16 - 18 ກຸມພາ 2010 (3 ມື້, 18 ຊົ່ວໂມງ); ວັນອັງຄານ/ພຸດ/ພະຫັດ; ເວລາ 9:00 - 16:30 ໂມງ** |
| **ຄ່າຮຽນ** | 500.000 ກີບ (ລວມທັງຄ່າເອກະສານປະກອບການຮຽນ) |
| **ພາສາທີ່ໃຊ້ສອນ** | ພາສາອັງກິດ (ແປເປັນພາສາລາວ) |

## ☛ ຫຼັກສູດທີ 3: ການບໍລິຫານການຜະລິດສຳລັບອຸດສາຫະກຳຕັດຫຍິບ

| | |
|---|---|
| **ເນື້ອໃນຫຼັກສູດ** | ຈະຊ່ວຍໃຫ້ຜູ້ເຂົ້າຮ່ວມຝຶກອົບຮົມໄດ້ຮັບແນວຄວາມຄິດ ແລະທັກສະທີ່ມີລັກສະນະວິທະຍາສາດໃນການບໍລິຫານການຜະລິດທີ່ລົງເລິກທັກສະໃນການຄຸ້ມຄອງ "ອຸດສາຫະກຳຕັດຫຍິບ" ໂດຍສະເພາະ ແມ່ນການສ້າງແຜນການຜະລິດ, ການວິເຄາະຂະບວນການຜະລິດ, ຄຸນນະພາບຂອງຜະລິດຕະພັນ, 5ສ, ການຈັດຂະບວນການ ແລະ ການຄຸ້ມຄອງເວລາ. |
| **ເປົ້າໝາຍຜູ້ເຂົ້າຮ່ວມ** | ຫລັກສູດນີ້ເໝາະສຳລັບເຈົ້າຂອງທຸລະກິດຂະໜາດຍ່ອຍ, ຂະໜາດນ້ອຍ ແລະ ຂະໜາດກາງ, ຜູ້ຈັດການໂຮງງານ, ຜູ້ບໍລິຫານລະດັບກາງຈົນຮອດຫົວໜ້າແຖວງານໃນໂຮງງານຕັດຫຍິບ. |
| **ໄລຍະເວລາ** | **9 - 19 ມີນາ 2010 (9 ມື້, 27 ຊົ່ວໂມງ); ວັນຈັນ - ສຸກ; ເວລາ 17:30 - 20:45 ໂມງ** |
| **ຄ່າຮຽນ** | 300.000 ກີບ (ລວມທັງຄ່າເອກະສານປະກອບການຮຽນ) |
| **ພາສາທີ່ໃຊ້ສອນ** | ພາສາອັງກິດ (ແປເປັນພາສາລາວ) |

## ☛ ຫຼັກສູດທີ 4: ການບໍລິຫານການຕະຫຼາດ

| | |
|---|---|
| **ເນື້ອໃນຫຼັກສູດ** | ສຶກສາກ່ຽວກັບຂະບວນການຂອງການຕະຫຼາດ, ວິທີວິເຄາະສະພາບແວດລ້ອມການຄຸ້ມຄອງ, ວິເຄາະຈຸດດີ ແລະ ຈຸດອ່ອນ ຂອງບໍລິສັດ, ສ້າງແຜນພັດທະນາຕະຫຼາດສະເພາະ, ສ້າງຍຸດທະສາດການເຂົ້າຫາລູກຄ້າ, ຍຸດທະສາດ 4P. ພາຍຫຼັງສິ້ນສຸດ ການຝຶກອົບຮົມແລ້ວຍັງຈະມີການໃຫ້ຄຳປຶກສາສະເພາະສຳລັບບາງທ່ານທີ່ມີຄວາມສົນໃຈ. |
| **ໄລຍະເວລາ** | **29 ມີນາ - 9 ເມສາ 2010 (10 ມື້, 30 ຊົ່ວໂມງ); ວັນຈັນ - ສຸກ; ເວລາ 17:30 - 20:45 ໂມງ** |
| **ຄ່າຮຽນ** | 500.000 ກີບ (ລວມທັງຄ່າເອກະສານປະກອບການຮຽນ) |
| **ພາສາທີ່ໃຊ້ສອນ** | ພາສາອັງກິດ (ແປເປັນພາສາລາວ) |

**ຕິດຕໍ່ເອົາແບບຟອມສະໝັກໄດ້ທີ່ສູນຮ່ວມມືລາວ-ຍີ່ປຸ່ນ, ມຊ (ວິທະຍາເຂດດົງໂດກ) ເປີດຮັບສະໝັກນັບແຕ່ມື້ນີ້ເປັນຕົ້ນໄປ**

**ສອບຖາມຂໍ້ມູນເພີ່ມເຕີມໄດ້ທີ່ໝາຍເລກໂທລະສັບ (021) 725008, ແຟັກ : (021) 725016 ; 770267 ຫຼື (020) 2446461 (ນ. ລັດດາພອນ ຂັນຕິຍະວົງ). Web site: ljcenter.org ; Email : bzcourse@laopdr.com**